**SWIS-H**
STATEWIDE INFANT SCREENING - HEARING

# ເປັນຫຍັງລູກຂ້ອຍຈຶ່ງຕ້ອງເຮັດການກວດວິໄຈປະເມີນ?



ຖ້າລູກທ່ານບໍ່ໄດ້ຮັບຜົນອັນຊັດແຈ້ງຈາກການກວດການຟັງສຽງສອງຄັ້ງທຳອິດ ພວກເຂົາກໍຕ້ອງມີການກວດວິໄຈປະເມີນ.

ມັນອາດຈະມີຫຼາຍເຫດຜົນໃນການເຮັດແບບນີ້.

ມັນອາດຈະແມ່ນ:

- ມີນ້ຳ ຫຼື ການອຸດຕັນຢູ່ໃນຫູຂອງລູກທ່ານຫຼັງຈາກການຄອດ.
- ລູກທ່ານອາດໄດ້ສູນເສັຍການໄດ້ຍິນໄປບາງສ່ວນ

ມັນເປັນສິ່ງສຳຄັນທີ່ຕ້ອງຊອກຮູ້ໃຫ້ໄວເທົ່າທີ່ໄວໄດ້ວ່າລູກທ່ານໄດ້ຍິນດີປານໃດ ເພື່ອວ່າທ່ານແລະລູກທ່ານສາ ມາດ ໄດ້ຮັບຄຳແນະນຳທີ່ຖືກຕ້ອງພ້ອມທັງການອູ້ມຊູ.

ຖ້າທ່ານຢູ່ໄກຈາກໂຮງໝໍທີ່ທ່ານຖືກແນະນຳໄປໄກກວ່າ 100ກິໂລແມັດ ຈິ່ງສອບຖາມກັບຜູ້ທີ່ໃຫ້ເຈັ້ຍຂໍ້ມູນນີ້ເພື່ອເອົາຂໍ້ມູນກ່ຽວກັບ ໂຄງການ ການຊ່ວຍເຫຼືອກ້ານການເດີນທາງ ຂອງ SWIS-H

## ຈະມີຫຍັງເກີດຂຶ້ນໃນການກວດວິໄຈປະເມີນ?

ຈະມີການກວດຫຼາຍຢ່າງເພື່ອໃຫ້ຂໍ້ມູນອັນລະອຽດກ່ຽວກັບວ່າລູກທ່ານໄດ້ຍິນຢ່າງໃດ.

ຜູ້ຊ່ຽວຊານດ້ານການຟັງສຽງຊຶ່ງເປັນຜູ້ ຊ່ຽວຊານສະເພາະໃນການກວດການຟັງສຽງຈະການທຳການກວດນີ້. ການ ກວດປະເມີນນີ້ຈະບໍ່ຄິດຄ່າໃດໆ.

ບໍ່ມີການກວດອັນໃດທີ່ຈະເຮັດໃຫ້ລູກທ່ານເຈັບ.

## ຂ້ອຍຈະກະກຽມລູກຂ້ອຍຢ່າງໃດສຳລັບການກວດປະເມີນນີ້?

ໃນເປັນການດີທີ່ສຸດຖ້າລູກທ່ານນອນ ຫຼັບໃນຊ່ວງເວລາການກວດ. ເພາະເຫດນີ້ ມັນຈະເປັນການຊ່ວຍທີ່ດີທີ່ທ່ານມາໄວແດ່ໜ້ອຍນຶ່ງເພື່ອທ່ານຈະມີເວລາປ້ອນນົມລູກແລະເຮັດໃຫ້ ລູກນອນຫຼັບ.

ຖ້າທ່ານມີລູກຄົນອື່ນໆອີກກະຣຸນາຈັດຫາຄົນເບິ່ງລູກໃຫ້ທ່ານຢູ່ເຮືອນ ເພື່ອວ່າທ່ານຈະສາມາດຢູ່ກັບລູກນ້ອຍ ຕລອດການປະເມີນ. ສະພາບແວດລ້ອມຕ້ອງມີດງຽບ.

ເນື່ອງຈາກວ່າການວິໄຈປະເມີນນີ້ ກວມເອົາການກວດຫຼາຍຢ່າງ ຈິ່ງປະຕອນເຊົ້າ ຫຼື ຕອນບ່າຍໄວ້ຂຶ້ນຢູ່ກັບການນັດໝາຍຂອງທ່ານທີ່ຈັດໄວ້. ນອກຈາກນີ້ ທ່ານຄົງຢາກນຳເອົາຄົນ ຊ່ວຍອູ້ມຊູທ່ານມານຳກໍໄດ້.

## ການວິໄຈປະເມີນນີ້ຈະເຮັດແບບໃດ?

ການວິໄຈປະເມີນນີ້ເອີ້ນວ່າ ການ ກວດ ການຕອບຮັບການຟັງຂອງກ້ານສມອງ [Auditory Brainstem Response (ABR)]. ເຄື່ອງເຊັນເຊີ ທີ່ຄ້າຍກັບອັນທີ່ໃຊ້ໃນການກວດຈະຖືກນຳມາໃສ່ຢູ່ຫົວຂອງເດັກ. ສຽງຈະ ຖືກເປີດຜ່ານເຄື່ອງໃສ່ຫູສຳລັບຟັງໄປຫາລູກທ່ານ. ການຕອບຮັບຕໍ່ສຽງຂອງລູກທ່ານຈະຖືກບັນທຶກໄວ້. ການຕອບຮັບເຫຼົ່ານີ້ສະແດງໃຫ້ເຫັນເຖິງ ສຽງທີ່ເບົາທີ່ສຸດທີ່ລູກທ່ານສາມາດໄດ້ຍິນ.

## ຈະມີຫຍັງເກີດຂຶ້ນຫຼັງຈາກການປະເມີນ?

ຜູ້ຊ່ຽວຊານດ້ານການຟັງສຽງຈະສາມາດແຈ້ງໃຫ້ທ່ານຊາບເຖິງຜົນຮັບແລະຈະອະທິບາຍວ່າຜົນຮັບນີ້ມີຄວາມໝາຍຢ່າງໃດ ຕາມປົກກະຕິແລ້ວຈະແມ່ນໃນວັນດຽວກັນ.

ຖ້າລູກທ່ານໄດ້ຖືກພົບວ່າໄດ້ສູນເສັຍການຟັງສຽງ ທ່ານກໍຈະຖືກສົ່ງໄປຫາບໍຣິ ການພິເສດສະເພາະຢູ່ນຶ່ງໃນສາມໂຮງໝໍສຳລັບເດັກໃນຣັດ NSW. ບົດລາຍງານກໍຈະຖືກສົ່ງໄປຫາບໍຣິການເຫຼົ່ານີ້. ສຳເນົານຶ່ງກໍຈະຖືກສົ່ງໄປໃຫ້ທ່ານ ນາຍໝໍໃນທ້ອງຖິ່ນຂອງທ່ານ ແລະ ນາຍໝໍຊ່ຽວຊານກ່ຽວກັບເດັກ ດ້ວຍການອະນຸຍາດຂອງທ່ານ. ຜູ້ຊ່ຽວຊານດ້ານການຟັງສຽງ ແລະ ເຈົ້າໜ້າທີ່ສັງຄົມສົງເຄາະຈະຊ່ວຍທ່ານໃຫ້ໄດ້ຮັບບໍຣິການແລະການອູ້ມຊູທີ່ທ່ານແລະລູກທ່ານອາດຕ້ອງການ.

ຖ້າລູກນ້ອຍຂອງທ່ານໄດ້ຖືກພົບວ່າມີການຟັງສຽງດີເປັນປົກກະຕິ ແຕ່ພາຍຫຼັງມາທ່ານເກີດມີຄວາມກັງວົນກ່ຽວກັບການ ພັທນາ ການຟັງສຽງ, ການເວົ້າ ຫຼື ພາສາຂອງລູກທ່ານ ກະຣຸນາຈັດໃຫ້ລູກທ່ານໄປກວດການຟັງສຽງອີກຄັ້ງນຶ່ງ.

ການໂອ້ລົມກັບນາຍໝໍປະຈຳຄອບຄົວຂອງທ່ານເປັນບ່ອນເລີ້ມຕົ້ນທີ່ດີ. ການຟັງສຽງສາມາດກວດໄດ້ ບໍ່ວ່າອາຍຸ ຈະຢູ່ໃນຂັ້ນໃດ.

**ເພື່ອເອົາຂໍ້ມູນເພີ້ມຕື່ມ ກະຣຸນາເຂົ້າຢ້ຽມເບິ່ງເວັບໄຊຕ໌ທີ່ຢູ່ຂ້າງລຸ່ມນີ້:**

http://www.health.nsw.gov.au/kids-families

ການຕິດຕໍ່ໃນທ້ອງຖິ່ນ/ຣາຍລະອຽດຂອງການນັດໝາຍ

ເພື່ອຊອກເອົາຄຳແນະນຳດ້ານສຸຂພາບ ຈິ່ງ ຕິດຕໍ່ *healthdirect Australia*
http://www.healthdirect.gov.au/
**1800 022 222**

NSW GOVERNMENT | Health

© NSW Health September 2016 SHPN (NKF) 150239